**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-------------

ລັດຖະບານ

ເລກທີ 12 /ລບ

ນະຄອນຫຼວງວຽງຈັນ, ວັນທີ 20.12.2016.

# ມະຕິຕົກລົງ

## ກອງປະຊຸມລັດຖະບານເປີດກ້ວາງ ປະຈຳສົກປີ 2015-2016

ກອງປະຊຸມລັດຖະບານເປີດກ້ວາງ-ປະຈຳສົກປີ 2015-2016 ໄດ້ດຳເນີນແຕ່ວັນທີ 13 ຫາ 14 ທັນວາ 2016 ທີ່ສຳນັກງານນາຍົກລັດຖະມົນຕີ ພາຍໃຕ້ການເປັນປະທານຂອງທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີ ໂດຍມີບັນດາທ່ານສະມາຊິກລັດຖະບານຈຳນວນ 27 ທ່ານ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ, ປະທານ-ຫົວໜ້າອົງການຈັດຕັ້ງພັກ-ລັດ, ເລຂາທິການສະພາແຫ່ງຊາດ, ອົງການຕຸລາການ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ແຂກຖືກເຊີນ ລວມທັງໝົດຈຳນວນ 52 ທ່ານ ເຂົ້າຮ່ວມ. ກອງປະຊຸມໄດ້ຮັບຟັງການລາຍງານ, ປຶກສາຫາລື, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນ ດັ່ງນີ້:

I. <u>ກອງປະຊຸມໄດ້ຮັບຟັງການລາຍງານ ການສະຫຼຸບຕີລາຄາໂດຍສັງເຂບກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 1 ປີຜ່ານມາ; ຮ່າງຄຳສັ່ງກ່ຽວກັບມາດຕະການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ປີ 2017; ຮ່າງຄຳສັ່ງກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນການເງິນ ແລະ ແຜນເງິນຕາ ປະຈຳປີ 2017; ລາຍງານແຜນເງິນຕາ ປີ 2017-2020, ສະຫຼຸບສະພາບພົ້ນເດັ່ນການຈັດຕັ້ງປະຕິບັດແຜນເງິນຕາ ສົກປີ 2015-2016 ແລະ ແຜນເງິນຕາ ປີ 2017,</u> ຊຶ່ງລາຍງານໂດຍທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ.

1.1. <u>ກ່ຽວກັບການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 1 ປີ ຜ່ານມາ:</u>

ກອງປະຊຸມຕີລາຄາວ່າ ສົກປີງົບປະມານ 2015-2016 ແມ່ນປີທີ່ມີຄວາມຫຍຸ້ງຍາກ ແລະ ທ້າທາຍສູງ, ເປັນສົກງົບປະມານປີທຳອິດຂອງການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII. ໃນຂະນະດຽວກັນ ລັດຖະບານກໍຢູ່ໃນຊ່ວງທີ່ມີການປັບປຸງໂຄງປະກອບກົງຈັກການຈັດຕັ້ງ ໂດຍໄດ້ມີການປັບປ່ຽນບາງນະໂຍບາຍ ແລະ ມາດຕະການຈຳນວນໜຶ່ງ ຕາມທິດຂອງມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ນະໂຍບາຍຂອງລັດຖະບານຊຸດທີ VIII. ເຖິງຢ່າງໃດກໍຕາມ ລັດຖະບານມີຄວາມພະຍາຍາມສູງ ໃນການປະຕິບັດບັນດາຄາດໝາຍ ແລະ ໄດ້ເຂັ້ມງວດປະຕິບັດບັນດາກົນໄກ-ມາດຕະການຕ່າງໆ ເພື່ອໃຫ້ໄດ້ຕາມແຜນດັດແກ້ທີ່ສະ

ພາແຫ່ງຊາດຮັບຮອງ, ຊຶ່ງຜ່ານການຈັດຕັ້ງປະຕິບັດ ເຫັນວ່າມີທ່າຕັ້ງໜ້າດີຂຶ້ນ, ແຕ່ຍ້ອນເວລາປະຕິບັດມີໜ້ອຍ ຈຶ່ງບໍ່ສາມາດເຄື່ອນໄຫວໄດ້ຢ່າງເຕັມສ່ວນ; ພ້ອມນັ້ນ ກໍ່ມີຫຼາຍປັດໃຈ ທັງໃນຕົວ ແລະ ນອກຕົວທີ່ກະທົບໂດຍກົງຕໍ່ກັບການຈັດເກັບລາຍຮັບງົບປະມານ ແລະ ການປະຕິບັດແຜນລາຍຈ່າຍງົບປະມານ ໂດຍຄາດຄະເນລາຍຮັບໝົດປີນີ້ຈຳນວນ 22.555,59 ຕື້ກີບ ເທົ່າກັບ 95,17% (ບໍ່ໄດ້ຕາມແຜນ 1.153 ຕື້ກີບ) ແລະ ລາຍຈ່າຍທັງໝົດຈຳນວນ 30.128 ຕື້ກີບ ເທົ່າກັບ 96,82% (ຈະບໍ່ໄດ້ນຳໃຊ້ປະມານ 990 ຕື້ກີບ); ການດຸ່ນດ່ຽງຄາດຄະເນການຂາດດຸນທັງໝົດຈຳນວນ 7.572,48 ຕື້ກີບ ເທົ່າກັບ 6,97% ຂອງ GDP (ຕົວເລກ GDP = 108.709 ຕື້ກີບ).

**ສະພາບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໄລຍະ 3 ເດືອນຂ້າມຜ່ານ:** ຮອດວັນທີ 29 ພະຈິກ 2016 ສາມາດປະຕິບັດໄດ້ ຄື: ດ້ານລາຍຮັບໄດ້ທັງໝົດຈຳນວນ 2.029 ຕື້ກີບ ເທົ່າກັບ 62,3% ຂອງແຜນການ (ແຜນການ 3.060 ຕື້ກີບ); ດ້ານລາຍຈ່າຍ ປະຕິບັດໄດ້ທັງໝົດ 1.572 ຕື້ກີບ ເທົ່າກັບ 44% ຂອງແຜນການ (ແຜນການ 3.565 ຕື້ກີບ).

**ສຳລັບຄາດຄະເນການຈັດເກັບລາຍຮັບ ໄລຍະ 3ເດືອນຂ້າມຜ່ານ** ທັງໝົດຈະໄດ້ປະມານ 3.270 ຕື້ກີບ ເທົ່າກັບ 106,8% ຂອງແຜນການ; **ສ່ວນການຄາດຄະເນລາຍຈ່າຍ**ເງິນເດືອນ ແລະ ເງິນນະໂຍບາຍ ອາດຈະບໍ່ພຽງພໍຈຳນວນໜຶ່ງ ແລະ ຄາດວ່າຈະໄດ້ຮັບທຶນຈາກບັນດາໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາເຂົ້າມາ ພ້ອມທັງຈະມີລາຍຈ່າຍ ຊຳລະໜີ້ສິນຮອດກຳນົດທີ່ຈະຕ້ອງໄດ້ປະຕິບັດ ໃນ ໄລຍະ 3 ເດືອນຂ້າມຜ່ານ.

1.2. <u>ຮ່າງຄຳສັ່ງກ່ຽວກັບມາດຕະການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ປີ 2017:</u>

ລັດຖະບານຖືບັນຫາເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ເປັນບູລິມະສິດໜຶ່ງ ທີ່ຕ້ອງໄດ້ເອົາໃຈໃສ່ແກ້ໄຂໃຫ້ເປັນຮູບປະທຳ ແລະ ຮັບປະກັນໃຫ້ເບີກຈ່າຍເປັນລະບົບປົກກະຕິ (ບໍ່ໃຫ້ຊັກຊ້າແກ່ຍາວ). ນອກນັ້ນ ກໍເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ, ທັນຕາມກຳນົດເວລາ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກຳນົດ ແນໃສ່ເຮັດໃຫ້ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານບຳນານ, ຜູ້ເສຍອົງຄະ ໃນຂອບເຂດທົ່ວປະເທດ ໄດ້ຮັບເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍຂອງຕົນ ຕາມນະໂຍບາຍຂອງລັດຖະບານທີ່ວາງອອກແຕ່ລະໄລຍະ ທັນຕາມກຳນົດເວລາໃນແຕ່ລະເດືອນ.

ກອງປະຊຸມເຫັນດີຮັບຮອງເອົາຮ່າງຄຳສັ່ງສະບັບດັ່ງກ່າວ ຕາມການສະເໜີຂອງກະຊວງການເງິນ, ແຕ່ໃຫ້ສົມທົບກັບພາກສ່ວນກ່ຽວຂ້ອງ ປັບປຸງຕື່ມຕາມການປະກອບຄຳເຫັນຂອງສະມາຊິກລັດຖະບານ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ໂດຍເອົາໃຈໃສ່ຕື່ມ ດັ່ງນີ້:

- ໃຫ້ເອົາໃຈໃສ່ແກ້ໄຂການເບີກຈ່າຍເງິນເດືອນ ໃຫ້ສຳເລັດພາຍໃນປີ 2016 ນີ້ ໂດຍບໍ່ໃຫ້ມີການເບີກ-ຈ່າຍຄ້າງຄາອີກ, ຖ້າມີບັນຫາກໍ່ໃຫ້ຮີບຮ້ອນສະເໜີລັດຖະບານ ເພື່ອມີວິທີແກ້ໄຂ.
- ໃນປີ 2017 ຕ້ອງໃຫ້ການເບີກ-ຈ່າຍເງິນເດືອນໄປຕາມລະບົບ, ວ່ອງໄວ ແລະ ທົ່ວເຖິງໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ສົມທົບກັບທະນາຄານ ແຫ່ງ ສປປ ລາວ ແລະ ກະຊວງພາຍໃນ ປະສານງານໃກ້ຊິດ ເພື່ອແກ້ໄຂບັນຫາເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໃຫ້ເຂົ້າສູ່ລະບົບທັນສະໄໝໃນຂອບເຂດທົ່ວປະເທດ; ໃຫ້ນະຄອນຫຼວງວຽງຈັນ, ບັນດາແຂວງ ຊີ້ນຳຂັ້ນເມືອງຢ່າງໃກ້ຊິດ ໃນການເບີກຈ່າຍເງິນອຸດໜູນຕ່າງໆ ຕາມທີ່ໄດ້ມີການຕົກລົງໄປແລ້ວ; ໃຫ້ກະຊວງພາຍໃນ

ສົມທົບກັບບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຮີບຮ້ອນ ກວດກາບັນຊີພະນັກງານ-ລັດຖະກອນໃຫ້ລະອຽດຊັດເຈນ ແລະ ຫັນການຄຸ້ມຄອງພະນັກງານ-ລັດຖະກອນ ໃຫ້ເຂົ້າສູ່ລະບົບທັນສະໄໝ (ໃຫ້ພະນັກງານ-ລັດຖະກອນທຸກຄົນໄດ້ເປີດບັນຊີເງິນເດືອນ ຫຼື ນຳໃຊ້ບັດ ATM ຂອງຕົນ).

1.3. <u>ກ່ຽວກັບຮ່າງຄຳສັ່ງວ່າດ້ວຍແຜນພັດທະນາເສດຖະກິດ-ສັງຄົມ, ແຜນການເງິນ ແລະ ແຜນເງິນຕາ ປະຈຳປີ 2017:</u>

ກອງປະຊຸມໄດ້ຕົກລົງ ແລະ ຊີ້ນຳ ຄື: ເຫັນດີໃຫ້ປັບປຸງຮ່າງຄຳສັ່ງດັ່ງກ່າວມາເປັນດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປີ 2017 ເພື່ອໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍການລົງທຶນຂອງລັດ ແລະ ມະຕິຂອງສະພາແຫ່ງຊາດ.

ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ສົມທົບກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປັບປຸງໃຫ້ກະທັດຮັດ ແລະ ຊັດເຈນຕື່ມ ເພື່ອໃຫ້ສາມາດປະກາດໃຊ້ ແລະ ຈັດຕັ້ງປະຕິບັດໂດຍໄວ.

1.4. <u>ກ່ຽວກັບແຜນເງິນຕາ ປີ 2017-2020, ສະຫຼຸບສະພາບພົ້ນເດັ່ນການຈັດຕັ້ງປະຕິບັດແຜນເງິນຕາ ສົກປີ 2015-2016 ແລະ ແຜນເງິນຕາ ປີ 2017:</u>

ກອງປະຊຸມໄດ້ຕົກລົງ ແລະ ຊີ້ນຳ ຄື: ໃຫ້ທະນາຄານ ແຫ່ງ ສປປ ລາວ ເອົາໃຈໃສ່ຄຸ້ມຄອງອັດຕາເງິນເຟີ້, ໃຫ້ຮີບຮ້ອນຄົ້ນຄວ້າແກ້ໄຂບັນຫາຄວາມແຕກຕ່າງລະຫວ່າງອັດຕາແລກປ່ຽນ ໃນລະບົບທະນາຄານ ແລະ ນອກທະນາຄານ; ໃຫ້ເອົາໃຈໃສ່ຕິດຕາມກວດກາຮ້ານແລກປ່ຽນເງິນຕາ ໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບການ ບໍ່ໃຫ້ມີການກັກຕູນເງິນຕາຕ່າງປະເທດເພື່ອແກ່ງກຳໄລ ຖ້າພົບເຫັນຕ້ອງດຳເນີນມາດຕະການເດັດຂາດຕໍ່ຜູ້ກະທຳຜິດ.

1.5. <u>ກ່ຽວກັບການສະຫຼຸບສັງລວມໜີ້ສິນບັນດາໂຄງການລົງທຶນຂອງລັດ:</u>

ກອງປະຊຸມໄດ້ຕົກລົງ ແລະ ຊີ້ນຳ ຄື: ໃຫ້ອົງການກວດກາລັດຖະບານ ເປັນເຈົ້າການສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເອົາໃຈໃສ່ກວດກາ, ມີມາດຕະການທີ່ເໝາະສົມ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ໃນທຸກຮູບແບບ, ມອບໃຫ້ຄະນະຕ້ານການສໍ້ລາດບັງຫຼວງຂອງລັດຖະບານ ລົງເລິກຊີ້ນຳ ແລະ ມອບໃຫ້ຄະນະຊີ້ນຳການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ລົງເລິກເຮັດວຽກແກ້ໄຂໜີ້ສິນຢ່າງຖືກຕ້ອງ, ແທດຕົວຈິງ, ໂປ່ງໃສ ແລະ ສືບຕໍ່ເກັບກຳຂໍ້ມູນໃຫ້ຊັດເຈນ ແລະ ຄົ້ນຄວ້າມາດຕະການແກ້ໄຂບັນຫາໜີ້ສິນຂອງລັດ, ສືບຕໍ່ສະກັດກັ້ນບໍ່ໃຫ້ເກີດມີໜີ້ສິນຂຶ້ນຕື່ມອີກ. ພ້ອມທັງ ໃຫ້ຂະແໜງການ ແລະ ທ້ອງຖິ່ນ ເພີ່ມທະວີຄວາມຮັບຜິດຊອບໃນການຄົ້ນຄວ້າອະນຸມັດໂຄງການລົງທຶນຂອງລັດໃຫ້ໄປຕາມແຜນການ, ສອດຄ່ອງກັບລະບຽບການ ແລະ ກົດໝາຍວ່າດ້ວຍການລົງທຶນຂອງລັດ ແລະ ຄວາມສາມາດຕົວຈິງຂອງງົບປະມານ.

II. <u>ກອງປະຊຸມໄດ້ຮັບຟັງລາຍງານ ຄວາມຄືບໜ້າໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ແລະ ລາວ-ໄທ ໄລຍະສອງ</u>, ຊຶ່ງສະເໜີໂດຍທ່ານລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ.

ກອງປະຊຸມ ຮັບຊາບການລາຍງານ ກ່ຽວກັບຄວາມຄືບໜ້າໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ແລະ ລາວ-ໄທ ໄລຍະສອງ ແລະ ເຫັນດີເປັນເອກະພາບ ກ່ຽວກັບຄວາມໝາຍ, ຄວາມສຳຄັນ ຂອງສອງໂຄງການດັ່ງກ່າວ ຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ມອບໃຫ້ກະຊວງໂຍທາທິການ

ແລະ ຂົນສົ່ງ ສົມທົບກັບກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນກ່ຽວຂ້ອງນຳໄປຄົ້ນຄວ້າ ປຶກສາຫາລືໃນລາຍລະອຽດ ຕາມການປະກອບຄຳເຫັນຂອງກອງປະຊຸມ.

III. <u>ກອງປະຊຸມໄດ້ຮັບຟັງການລາຍງານ ການປັບປຸງກົນໄກປະສານງານ ລະຫວ່າງບັນດາກະຊວງ-ອົງການ, ທ້ອງຖິ່ນ ແລະ ສຳນັກງານນາຍົກລັດຖະມົນຕີ,</u> ຊຶ່ງສະເໜີໂດຍລັດຖະມົນຕີກະຊວງພາຍໃນ.

ດ້ານຫຼັກການກອງປະຊຸມເຫັນດີໃຫ້ປັບປຸງກົນໄກປະສານງານ ລະຫວ່າງບັນດາກະຊວງ-ອົງການ, ທ້ອງຖິ່ນ ແລະ ສຳນັກງານນາຍົກລັດຖະມົນຕີ, ແຕ່ໃຫ້ກະຊວງພາຍໃນສົມທົບກັບພາກສ່ວນກ່ຽວຂ້ອງ ສຶກສາຄົ້ນຄ້ວາເອົາເນື້ອໃນຂອງດຳລັດ ສະບັບເລກທີ 220/ນຍ ເປັນພື້ນຖານໃນການປັບປຸງ ໂດຍໃຫ້ຈັດສຳມະນາເປີດກວ້າງ ຊຶ່ງເນື້ອໃນແມ່ນໃຫ້ລວມເອົາການປະສານງານລະຫວ່າງສຳນັກງານນາຍົກລັດຖະມົນຕີ ກັບບັນດາກະຊວງ-ອົງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ. ພ້ອມກັນນັ້ນ ກໍ່ໃຫ້ກຳນົດລະອຽດບັນຫາໃດທີ່ຈະເອົາເຂົ້າກອງປະຊຸມລັດຖະບານ, ກອງປະຊູມນາຍົກ-ຮອງນາຍົກລັດຖະມົນຕີ, ຜູ້ຕົກລົງເອົາຫົວຂໍ້ເຂົ້າຜ່ານບັນດາກອງປະຊຸມດັ່ງກ່າວ ແລະ ບັນຫາອື່ນໆ. ຫລັງຈາກນັ້ນ ຈຶ່ງນຳມາສະເໜີຜ່ານກອງປະຊຸມລັດຖະບານປະຈຳເດືອນ ມັງກອນ 2017 ນີ້.

IV. <u>ກອງປະຊຸມໄດ້ຮັບຟັງລາຍງານ ຮ່າງລັດຖະບັນຍັດວ່າດ້ວຍການກຳນົດອັດຕາຄ່າທຳນຽມທາງ,</u> ຊຶ່ງສະເໜີໂດຍຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ.

ດ້ານຫຼັກການ ກອງປະຊຸມເຫັນດີຮັບຮອງເອົາຮ່າງລັດຖະບັນຍັດດັ່ງກ່າວ, ແຕ່ໃຫ້ກະຊວງການເງິນເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງປັບປຸງຄືນຕື່ມກ່ຽວກັບອັດຕາຄ່າທຳນຽມທາງໃຫ້ແທດເໝາະກັບສະພາບຕົວຈິງໃນປະຈຸບັນ ແລະ ໃຫ້ລໍຖ້າຮອດກາງປີ 2017 ຈຶ່ງປະກາດໃຊ້, ສ່ວນເວລາໃນການປະກາດໃຊ້ນັ້ນຈະໄດ້ຕົກລົງເປັນເອກະພາບກັນອີກເທື່ອໜຶ່ງ.

V. <u>ກອງປະຊຸມໄດ້ຮັບຟັງລາຍງານ ກ່ຽວກັບການສະຫຼູບຕີລາຄາການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຂອງບັນດາຂະແໜງການ, ການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ໃນໄລຍະຜ່ານມາ ແລະ ແຜນໃນຕໍ່ໜ້າ</u>, ຊຶ່ງສະເໜີໂດຍລັດຖະມົນຕີກະຊວງຍຸຕິທຳ.

ກອງປະຊຸມ ໄດ້ຕົກລົງເຫັນດີມອບໃຫ້ກະຊວງຍຸຕິທຳ ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄ້ວາລົງເລິກປັບປຸງລະບຽບການ, ຂັ້ນຕອນຕ່າງໆໃຫ້ຖືກຕ້ອງ, ສອດຄ່ອງ, ມີວິທະຍາສາດໃນການສ້າງ ແລະ ປັບປຸງກົດໝາຍ ຫຼື ນິຕິກຳລຸ່ມກົດໝາຍ ລວມທັງການຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ.

VI. <u>ກອງປະຊຸມໄດ້ຮັບຟັງລາຍງານການສະຫຼູບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະລັດຖະບານ ຊຸດທີ VIII</u>, ຊຶ່ງສະເໜີໂດຍລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

ໃນໄລຍະ 8 ເດືອນ ທີ່ລັດຖະບານ ຊຸດທີ VIII ໄດ້ເຂົ້າມາບໍລິຫານປະເທດ, ໄດ້ກຳນົດ 6 ໜ້າວຽກຈຸດສຸມຕົ້ນຕໍ ເຊັ່ນ: (1) ດ້ານການເມືອງແນວຄິດ, (2) ດ້ານເສດຖະກິດ, (3) ດ້ານວັດທະນະທຳ-ສັງຄົມ (4) ດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, (5) ດ້ານວຽກງານບໍລິຫານລັດ, (6) ດ້ານວຽກງານການຕ່າງປະເທດ.

ໃນໄລຍະເວລາດັ່ງກ່າວ ເຖິງວ່າຈະປະສົບພົບພໍ້ກັບສິ່ງທ້າທາຍ, ທົດສອບໃຫຍ່ຫຼາຍຢ່າງກໍ່ຕາມ, ແຕ່ພາຍໃຕ້ການນຳພາ-ຊີ້ນຳອັນຖືກຕ້ອງ ຂອງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ລັດຖະບານ ໄດ້ຕັ້ງໜ້າເປັນເຈົ້າການບໍລິຫານປະເທດຊາດ ດ້ວຍຄວາມຮັບຜິດຊອບສູງສຸດ ແລະ ຕັດສິນໃຈແກ້ໄຂສະພາບເຄັ່ງຮ້ອນໃນຫຼາຍດ້ານ ເປັນຕົ້ນແມ່ນດ້ານເສດຖະກິດ ສຸມໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໃນປີທຳອິດ ຊຶ່ງສາມາດຍາດໄດ້ ຜົນສຳເລັດອັນພົ້ນເດັ່ນທີ່ເປັນໜ້າຊົມຊື່ນຫຼາຍຢ່າງ.

ແຕ່ຄຽງຄູ່ກັບນັ້ນ ສັງເກດເຫັນວ່າ ການບໍລິຫານປະເທດຂອງລັດຖະບານພວກເຮົາຍັງປະສົບກັບສິ່ງທ້າທາຍໃຫຍ່ຫຼວງຫຼາຍຢ່າງ, ຍັງມີຈຸດອ່ອນຄົງຄ້າງທີ່ຕ້ອງໄດ້ແກ້ໄຂ ເປັນຕົ້ນແມ່ນການຊີ້ນຳການແກ້ໄຂບັນຫາຕ່າງໆຂອງບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຍັງມີຄວາມຊັກຊ້າ ເປັນຕົ້ນ:

- ການຄົ້ນຄວ້າເພື່ອກຳນົດນະໂຍບາຍ ແລະ ນິຕິກຳຕ່າງໆເພື່ອຄຸ້ມຄອງຍັງເຮັດບໍ່ທັນໄດ້ດີ, ບາງອັນກໍ່ຍັງບໍ່ທັນມີຈຸດສຸມໄປລວງດຽວກັນ ລະຫວ່າງ ຂະແໜງການ ແລະ ທ້ອງຖິ່ນ, ການກວດກາຕິດຕາມບັນດານິຕິກຳຕ່າງໆທີ່ອອກໄປແລ້ວ ຍັງບໍ່ທັນຄົບຖ້ວນ ແລະ ນຳໃຊ້ເຂົ້າໃນຕົວຈິງ;

- ຄວາມຮັບຜິດຊອບຂອງບັນດາຂະແໜງການ ຕາມພາລະບົດບາດໃນການຜັນຂະຫຍາຍມະຕິຄຳສັ່ງ, ບາງບ່ອນບໍ່ທັນສູງ ແລະ ການຊຸກຍູ້ໃນການຈັດຕັ້ງປະຕິບັດກົດໝາຍກໍ່ຍັງບໍ່ທັນເຂັ້ມງວດ, ເຮັດໃຫ້ການຊີ້ນຳ-ນຳພາວຽກຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍໃນຂະແໜງການ ແລະ ທ້ອງຖິ່ນ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ, ຍັງມີການສວຍໃຊ້ຊ່ອງຫວ່າງຂອງກົດໝາຍ ໃນຫຼາຍຮູບການ.

- ການປັບປຸງການຈັດຕັ້ງຂອງຂະແໜງການ ແລະ ທ້ອງຖິ່ນຍັງບໍ່ທັນສຳເລັດ ແລະ ເຮັດໃຫ້ບໍ່ສາມາດປັບປຸງກົນໄກ ແລະ ແບບແຜນວິທີເຮັດວຽກ ບາງອັນຍັງບໍ່ທັນສອດຄ່ອງກັບຕົວຈິງ ເຊັ່ນ: ມີຫຼາຍຂອດຫຼາຍຂັ້ນຕອນ ແລະ ບໍ່ທັນປະຕິບັດໄດ້ຕາມແຜນ, ເຮັດໃຫ້ກົນໄກການປະສານງານ ລະຫວ່າງສູນກາງ ແລະ ທ້ອງຖິ່ນຍັງບໍ່ເປັນລະບົບຄົບຊຸດ, ຍັງຊ້ຳຊ້ອນກັນ, ບໍ່ສາມາດປະຕິບັດໄດ້ຕາມແຜນການ ວາງໄວ້.

VII. ທິດທາງວຽກງານຈຸດສຸມຂອງລັດຖະບານ ປະຈຳເດືອນ ມັງກອນ 2017:

(1)- ສືບຕໍ່ຮັບປະກັນການຮັກສາສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂເອື້ອອຳນວຍໃຫ້ພວກເຮົາໃນການສ້າງສາພັດທະນາ ຢ່າງຕໍ່ເນື່ອງ.

(2)- ສຸມທຸກກຳລັງແຮງເຂົ້າໃນການພັດທະນາທາງດ້ານເສດຖະກິດ-ສັງຄົມ ຕາມທິດທາງ, ຄາດໝາຍສູ້ຊົນ, ນະໂຍບາຍ, ວຽກຈຸດສຸມ, ກົນໄກ ແລະ ມາດຕະການ ທີ່ໄດ້ກຳນົດໃນຮ່າງດຳລັດທີ່ພວກເຮົາໄດ້ເອົາມາຜ່ານກອງປະຊຸມລັດຖະບານ ໃນຄັ້ງນີ້ ແລະ ລັດຖະບານ ຈະປະກາດໃຊ້ໃນອາທິດນີ້. ດຳລັດດັ່ງກ່າວໄດ້ກຳນົດວຽກງານຈຸດສຸມຂອງບັນດາກະຊວງ, ອົງການຂັ້ນສູນກາງ, ນະຄອນຫລວງວຽງຈັນ ແລະ ບັນດາແຂວງ. ດັ່ງນັ້ນ ແຕ່ລະພາກສ່ວນຕ້ອງຈັດຕັ້ງເຜີຍແຜ່, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ເພື່ອສະຫລຸບລາຍງານຄວາມຄືບໜ້າໃຫ້ລັດຖະບານ ເປັນປົກກະຕິທຸກໆໄຕມາດ.

(3)- ຖອດຖອນບົດຮຽນ ແລະ ປັບປຸງບັນດາຂໍ້ຄົງຄ້າງໃນການເຄື່ອນໄຫວ ວຽກງານໃນໄລຍະ 8 ເດືອນຜ່ານມາ, ຊຶ່ງໄດ້ສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງລັດຖະບານ ແລະ ຖອດຖອນບົດຮຽນຈຳນວນໜຶ່ງ. ໃນຕໍ່ໜ້າຕ້ອງຖືເອົາການສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນທີ່ເປັນພື້ນຖານໃຫ້

ແກ່ການປັບປຸງ. ພ້ອມນີ້ ກໍຕ້ອງໄດ້ສຸມໃສ່ແກ້ໄຂບັນຫາການປະສານງານລະຫວ່າງຂະແໜງການ ດ້ວຍກັນ ແລະ ລະຫວ່າງຂະແໜງການ ແລະ ທ້ອງຖິ່ນ ໂດຍໃຫ້ຮີບຮ້ອນປັບປຸງດຳລັດ 220/ນຍ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍລັດຖະບານ ແລະ ແທດເໝາະກັບສະພາບຕົວຈິງໃນປະຈຸບັນ.

(4)- ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຕໍ່ການສ່ອງແສງ ແລະ ບັນດາຄຳເຫັນທີ່ສະພາແຫ່ງຊາດ ກໍ່ຄືສະພາທ້ອງຖິ່ນ ໄດ້ສະເໜີໃນການເຄື່ອນໄຫວບໍລິຫານຄຸ້ມຄອງລັດຄຸ້ມຄອງສັງຄົມ ຂອງລັດຖະບານ ກໍ່ຄືອຳນາດການປົກຄອງທ້ອງຖິ່ນ.

(5)- ໃຫ້ບັນດາສະຫາຍເລຂາ, ເຈົ້າແຂວງ ຊີ້ນຳການຈັດກອງປະຊຸມສະພາປະຊາຊົນແຂວງ ແຂວງ (ຕາມການສະເໜີຂອງສະພາແຫ່ງຊາດ).

(6)- ໃຫ້ເອົາໃຈໃສ່ບັນຫາທີ່ດິນ, ບັນຫາຢາເສບຕິດ ຊຶ່ງແມ່ນວຽກຈຸດສຸມສຳຄັນ ທີ່ຈະພ້ອມກັນເຊີດຊູຍົກສູງຄວາມຮັບຜິດຊອບ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

(7)- ໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສົມທົບກັບບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ປຶກສາຫາລື ກ່ຽວກັບແຜນຄາດຄະເນໃນການຈັດກອງປະຊຸມລັດຖະບານເປີດກ້ວາງປະຈຳກາງປີ ຫຼື ປະຈຳປີ, ຈາກນັ້ນ ໃຫ້ສະເໜີຂໍທິດຊີ້ນຳຈາກນາຍົກລັດຖະມົນຕີ ແລະ ບັນດາຮອງນາຍົກລັດຖະມົນຕີ; ສຳລັບກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນມັງກອນ 2017 ຄາດວ່າຈະໄດ້ຈັດຂຶ້ນໃນລະຫວ່າງວັນທີ 24-25 ມັງກອນ 2016.

(8)- ກອງປະຊຸມຮຽກຮ້ອງໃຫ້ບັນດາທ່ານສະມາຊິກລັດຖະບານ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ຈົ່ງນຳເອົາເນື້ອໃນຈິດໃຈທີ່ໄດ້ປຶກສາຫາລື ແລະ ເປັນເອກະພາບນຳກັນຢູ່ໃນກອງປະຊຸມເທື່ອນີ້ ໄປຈັດຕັ້ງຜັນຂະຫຍາຍໃຫ້ເປັນແຜນວຽກອັນລະອຽດຢູ່ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ ໃຫ້ເກີດໝາກເກີດຜົນຕົວຈິງ.

**ຕາງໜ້າລັດຖະບານ,**

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ